VIENTIANE CENTER
ວຽງຈັນເຊັ້ນເຕີ
ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

# ບົດລາຍງານຜົນດຳເນີນທຸລະກິດ 6 ເດືອນຕົ້ນປີ ແລະ ແຜນດຳເນີນທຸລະກິດ 6 ເດືອນທ້າຍປີ 2021 ຂອງ ວຈຊຕ

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

## ສາລະບານ

1. ແນະນຳບໍລິສັດ

2. ວິໄສທັດ ແລະ ພາລະກິດ

   2.1 ວິໄສທັດ

   2.2 ພາລະກິດ

3. ໂຄງຮ່າງການຈັດຕັ້ງ

4. ຜົນການດຳເນີນທຸລະກິດ

   4.1 ລາຍໄດ້

   4.2 ກຳໄລ ແລະ ຂາດທຶນ

   4.3 ຊັບສິນທັງໝົດ

   4.4 ໜີ້ສິນທັງໝົດ

   4.5 ການມອບພັນທະພາສີອາກອນ

5. ວຽກງານສົ່ງເສີມການພັດທະນາທຸລະກິດ

6. ວຽກທີ່ກ່ຽວຂ້ອງຂອງຄະນະກຳມະການ

7. ຄວາມຮັບຜິດຊອບຕໍ່ສັງຄົມຂອງອົງກອນ

8. ແຜນການດຳເນີນທຸລະກິດປະຈຳປີ 2021

## 1. ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ສ້າງຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 30 ພະຈິກ 2017 ໂດຍບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕ່ອນເໜືອ ຈຳກັດ ທີ່ຮ່ວມກັນສ້າງຕັ້ງຂຶ້ນລະຫວ່າງກຸ່ມບໍລິສັດ ກໍ່ສ້າງ ລົງທຶນ ແລະ ຖືຮຸ້ນແຂວງຢຸນນານ ຈຳກັດ ແລະ ກຸ່ມບໍລິສັດ ກຣິດຕະພິງ ຈຳກັດ. ບໍລິສັດໄດ້ສຳເລັດການຈົດທະບຽນ ໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການໃນວັນທີ 31 ພຶດສະພາ 2019 (ຊື່ຫຼັກຊັບ "VCL"), ທຶນຈົດທະບຽນໃນປະຈຸບັນ ແມ່ນ 147,199,900,000 ກີບ.

ກິດຈະການຫຼັກ ຂອງບໍລິສັດແມ່ນພັດທະນາອະສັງຫາລິມະຊັບສະເພາະດ້ານປະເພດອາຄານເພື່ອໃຫ້ເຊົ່າ-ຂາຍ, ທຸລະກິດຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນປະກອບດ້ວຍ ການເກັບຄ່າເຊົ່າພື້ນທີ່ໃນສູນການຄ້າ ວຽງຈັນເຊັ້ນເຕີ ແລະ ຫັກເອົາເປີເຊັນຕາມຍອດຂາຍເປັນຄ່າບໍລິຫານສູນການຄ້າ, ການຈັດງານວາງສະແດງເຊິ່ງເປັນກຳມະສິດພ້ອມທັງ ບໍລິຫານພື້ນທີ່ວາງສະແດງດ້ວຍການເກັບຄ່າເຊົ່າ, ການເກັບຄ່າເຊົ່າປ້າຍໂຄສະນາ, ການເກັບຄ່າເຊົ່າສຳນັກງານຫ້ອງການ .

ໂດຍຜ່ານການສ້າງເປັນແບຣນຂອງຕົນ ເພີ່ມປະສິດທິພາບໃນວຽກງານການບໍລິການ ປັບປຸງຮູບແບບການດຳ ເນີນທຸລະກິດ, ສູນການຄ້າ ແລະ ສຳນັກງານຫ້ອງການໄດ້ດຶງດູດທຸລະກິດທີ່ມີຊື່ສຽງ ເຊັ່ນ: ທະນາຄານແຫ່ງ ສປ ຈີນ, ຮ້ານ ກາເຟອາເມຊອນ, ຮ້ານມິນິໂຊ, ແລະວິສາຫະກິດຕ່າງປະເທດຂະໜາດໃຫຍ່ ເຊັ່ນ: ບໍລິສັດລິດໄຟລາວຈີນ, ບໍລິສັດໄຟຟ້າ ເກົາຫລີ, ບໍລິສັດ ປະກັນໄພຮຸ່ງເຄັນໂຊ ບໍລິສັດດີເຄເອັດສເຣັດສໄດ້ເຂົ້າມາເຊົ່າພື້ນທີ່ຮ້ານຄ້າ ແລະ ອາຄານສຳນັກງານ ຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ. ມາເຖິງປະຈຸບັນ ວຽງຈັນເຊັ້ນເຕີ ໄດ້ສ້າງເປັນສູນການຄ້າ ສູນການສຳນັກງານ ສູນການທາງດ້ານການເງິນ ແລະ ສູນການການຈັດງານວາງສະແດງສິນຄ້າໃນລາວ, ເປັນແບຣນສູນການຄ້າອັນດັບໜຶ່ງຢູ່ລາວ ແລະຕົວແບບການຮ່ວມມື ຂອງລັດຖະບານສອງຊາດລາວ ຈີນ.

## 2. ວິໄສທັດ ແລະ ພາລະກິດ

### 2.1 ວິໄສທັດ

ວຈຊຕ ມຸ່ງໝັ້ນ ການສ້າງແບຣນສູນການຄ້າອັນດັບໜຶ່ງຢູ່ລາວ, ເປັນສູນການການຄ້າ, ສູນການສຳນັກງານ, ສູນ ການການເງິນ ແລະ ສູນການການວາງສະແດງ, ສູນການການບໍລິການຂອງປະເທດລາວ.

### 2.2 ພາລະກິດ

ນຳເອົາວິຖີຊີວິດແບບຕົວເມືອງທີ່ເຕັມໄປດ້ວຍຄວາມສຸກໃຫ້ແກ່ປະເທດລາວ.

## 3. ໂຄງຮ່າງການຈັດຕັ້ງ

3.1 ໂຄງຮ່າງການຈັດຕັ້ງ ວຈຊຕ: ປະກອບດ້ວຍສະມາຊິກສະພາບໍລິຫານ 11 ທ່ານ, ໃນນັ້ນປະກອບມີ ຜູ້ອຳນວຍການ.

3.2 ສະພາບໍລິຫານ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ສະໄໝທີ 2 ປະກອບດ້ວຍ 11 ທ່ານ:

- ທ່ານ ຫວັງເຫວີຍຄຸນ (Mr. Wang Weikun) ເປັນປະທານ

- ທ່ານ ນາງ ອໍລະໄທ ສັນຕິຄີງຄາ — ເປັນຮອງປະທານ
- ທ່ານ ຫຼີ ສ່ຽວຕົ໋ງ (Mr. Li Xiaodong) — ເປັນສະມາຊິກ, ຜູ້ອຳນວຍການໃຫຍ່
- ທ່ານ ບິວລະພາ ສັນຕິຄີງຄາ — ເປັນສະມາຊິກ
- ທ່ານ ອຸ່ ຊິງຫວາ (Mr. Wu Xinghua) — ເປັນສະມາຊິກ
- ທ່ານ ເຊີ່ນ ເຟີ່ຍຫູ້ (Mr. Sun Feihu) — ເປັນສະມາຊິກ
- ທ່ານ ຫຼໍ ສ້ຽວດົ໋ງ (Mr. Luo Xiaodong) — ເປັນສະມາຊິກ
- ທ່ານ ສ່ຽວ ໂຢ໋ງ (Mr. Xiao Yong) — ເປັນສະມາຊິກອິດສະຫຼະ
- ທ່ານ ຈ່າງທຽນຢີ້(Zhang Tianyi) — ເປັນສະມາຊິກອິດສະຫຼະ
- ທ່ານ ວຽງສະຫວັນ ພັນທະລີ — ເປັນສະມາຊິກອິດສະຫຼະ
- ທ່ານ ຈໍຊິ໋ງ ບິວສີເນ໋ງມາ — ເປັນສະມາຊິກອິດສະຫຼະ

## 4. ຜົນການດຳເນີນທຸລະກິດ

### 4.1 ລາຍຮັບ

ໃນ 6 ເດືອນຕົ້ນປີ 2021, ບໍລິສັດມີລາຍຮັບຈາກການດຳເນີນທຸລະກິດປະຈຳປີຂອງບໍລິສັດແມ່ນເປັນເງິນ 5.121.735.667,42 ກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 60%, ເມື່ອທຽບໃສ່ໄລຍະດຽວກັນຂອງປີ 2020 ແມ່ນຫຼຸດລົງ 9%. ໃນນັ້ນ, ລາຍຮັບຈາກການເຊົ່າຮ້ານຄ້າ ແລະ ພື້ນທີ່ຫ້ອງການແມ່ນເປັນຈຳນວນເງິນ 4.263.174.649,33 ກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 73%; ລາຍຮັບຈາກການໃຫ້ເຊົ່າພື້ນທີ່ຈັດງານ ແລະ ປ້າຍໂຄສະນາ ແມ່ນເປັນຈຳນວນເງິນ 850.565.790,16 ກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 31%; ລາຍຮັບອື່ນໆ ແມ່ນເປັນຈຳນວນເງິນ 7.995.227,93 ກີບ. ສາເຫດທີ່ລາຍໄດ້ຫຼຸດລົງ: ເນື່ອງຈາກວ່າມີການປິດບໍລິການຊົ່ວຄາວໃນວັນທີ 23 ເມສາ ຫາ 4 ມິຖຸນາ ປີ 2021 ໂດຍໄດ້ປະຕິບັດຕາມມາດຕາການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແພລະບາດຂອງພະຍາດໂຄວິດ 19 ທີ່ແຈ້ງໂດຍຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໂດຍສະເພາະ ແມ່ນໂຮງໜັງຍັງປິດບໍລິການຈົນຮອດປະຈຸບັນນີ້ ເຮັດໃຫ້ລາຍໄດ້ມີການຫຼຸດລົງ.

### 4.2 ຜົນໄດ້ຮັບ (ກຳໄລ - ຂາດທຶນ)

ໃນ 6 ເດືອນຕົ້ນປີ 2021, ລາຍຈ່າຍລວມແມ່ນເປັນຈຳນວນເງິນ 1.504.446.331,00 ກີບ ກວມເອົາ 30%

ຂອງງົບປະມານລາຍຈ່າຍປະຈຳປີ, ໃນນັ້ນ ລາຍຈ່າຍດອກເບ້ຍແມ່ນເປັນເງິນ 1.130.313.576,00 ກີບ. ກຳໄລກ່ອນອາກອນເປັນຈຳນວນເງິນ 3.607.435.140 ກີບ ມີການຫຼຸດລົງ 17% ເມື່ອທຽບໃສ່ໄລຍະດຽວກັນຂອງປີທີ່ແລ້ວ, ກຳໄລສຸດທິເປັນຈຳນວນເງິນ 2.991.527.806 ກີບ. ສາເຫດທີ່ເຮັດໃຫ້ ກຳໄລສຸດທິຫຼຸດລົງ ແມ່ນມີການປິດບໍລິການຊົ່ວຄາວໃນວັນທີ 23 ເມສາ ຫາ 4 ມິຖຸນາ ປີ 2021 ໂດຍໄດ້ປະຕິບັດຕາມມາດຕາການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແພລະບາດຂອງພະຍາດໂຄວິດ 19 ທີ່ແຈ້ງໂດຍຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

**4.3 ລວມຊັບສິນ**

ໃນ 6 ເດືອນຕົ້ນປີ 2021, ຊັບສິນທັງໝົດຂອງບໍລິສັດ ແມ່ນເປັນຈຳນວນເງິນ 259.576.099.699 ກີບ ເມື່ອທຽບໃສ່ໄລຍະດຽວກັນຂອງປີ 2020 ແມ່ນເພີ່ມຂຶ້ນ 7%. ສາເຫດທີ່ມີການເພີ່ມຂຶ້ນ ແມ່ນຍ້ອນວ່າມູນຄ່າອະສັງຫາລິມະຊັບແບບລົງທຶນມີການເພີ່ມຂຶ້ນ ແລະ ສ້າງບໍລິສັດໃຫ້ມີກຳໄລ.

**4.4 ລວມໜີ້ສິນ**

ໃນ 6 ເດືອນຕົ້ນປີ 2021, ໜີ້ສິນທັງໝົດຂອງບໍລິສັດ ແມ່ນເປັນຈຳນວນເງິນ 83.333.401.641 ກີບ ເຊິ່ງເປັນການເພີ່ມຂຶ້ນ 15% ເມື່ອທຽບໃສ່ໄລຍະດຽວກັນຂອງປີ 2020. ເຫດຜົນຂອງໜີ້ສິນເພີ່ມຂຶ້ນ ແມ່ນຍ້ອນວ່າຜູ້ເຊົ່າກໍຄື ທະນາຄານແຫ່ງ ສປ ຈີນ ສາຂານະຄອນຫຼວງ ໄດ້ຈ່າຍຄ່າເຊົ່າໃຫ້ຫຼວງໜ້າ.

**4.5 ການມອບພັນທະອາກອນ**

ໃນ 6 ເດືອນຕົ້ນປີ 2021, ການມອບພັນທະອາກອນປະຈຳປີທັງໝົດຂອງບໍລິສັດແມ່ນເປັນຈຳນວນເງິນ 6.426.582 ກີບ, ສ່ວນຫຼາຍແມ່ນເປັນອາກອນເງິນເດືອນພະນັກງານ.

**5. ການດຶງດູດຜູ້ລົງທຶນ**

ຫວນຄືນໃນ 6 ເດືອນຕົ້ນປີ 2021, ຍ້ອນພະຍາດໂຄວິດ-19 ໄດ້ມີການແຜ່ລະບາດຄັ້ງທີ່ສອງໃນລາວ, ນັບແຕ່ນທີ 23 ເມສາ ຫາ 4 ມິຖຸນາ ປີ 2021, ຫ້າງວຽງຈັນເຊັ້ນເຕີໄດ້ປິດບໍລິການຊົ່ວຄາວເພື່ອປະຕິບັດຕາມມາດຕາການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແພລະບາດຂອງພະຍາດໂຄວິດ 19 ທີ່ແຈ້ງໂດຍຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ໂຊນຕຶກສຳນັກງານກໍຮັບຜົນກະທົບຄືກັນ ບັນດາບໍລິສັດສັ່ງໃຫ້ພະນັກງານຂອງຕົນເຮັດວຽກຢູ່ບ້ານ ເພື່ອຫຼຸດການຊຸມໂຮມ ເຮັດໃຫ້ການຊອກຫາລູກຄ້າ ແລະ ບໍລິການເປັນປົກກະຕິພົບຄວາມຫຍຸ້ງຍາກ. ແຕ່ທາງທີມງານ

ບໍລິຫານວຽງຈັນເຊັ້ນເຕີ ຍັງເສີບຕໍ່ສູ້ຊົນເພື່ອບັນລຸເປົ້າໝາຍປະຈຳປີ ຊຸກຍູ້ວຽກງານບໍລິຫານຕ່າງໆ ເຖິງແມ່ນວ່າໄດ້ຮັບຜົນກະທົບຈາກພະຍາດໂຄວິດ 19 ກໍຕາມ ແຕ່ວ່າວຽກງານການຊອກຫາລູກຄ້າຍັງໄດ້ມີຜົນງານເກີດຂຶ້ນ ລາຍລະອຽດຄືດັ່ງລຸ່ມນີ້:

ສຳລັບວຽກງານການຊອກຫາລູກຄ້າ ແລະ ການສ້າງລາຍຮັບຂອງໂຊນຫ້າງໃນ 6 ເດືອນຕົ້ນປີ 2021, ວຽງຈັນເຊັ້ນເຕີ ແມ່ນ ໄດ້ເນັ້ນການຂະຫຍາຍຕະຫຼາດພາຍໃນ ແລະ ຊອກຫາສິນຄ້າຍີ່ຫໍ້ດັງທີ່ມີໃນລາວມາເປີດຮ້ານວຽງຈັນເຊັ້ນເຕີ ເຊັ່ນ Elephant Lounge ຂອງໂຮງແຮມຄາວພຣາຊາ ຮ້ານແອບເປີ້ນ ແລະ ຮ້ານຂາຍເຟັດ Phonexay、Thongkeo、Jamiena ແລະອື່ນໆ ສ້າງເປັນເຂດສຸມລວມສິນຄ້າອັນໃດອັນໜຶ່ງຂຶ້ນມາ, ພະຍາຍາມຕິດຕໍ່ຫາລູກຄ້າທີ່ມີລິຂະສິດຂອງສິນຄ້າໃຫເຊິ່ງເປັນຍີ່ຫໍ້ດັງ. ໃນເວລາປິດບໍລິການຊົ່ວຄາວ ວຽງຈັນເຊັ້ນເຕີໄດ້ມີການປະຕິບັດໜ້າທີ່ດ້ານສັງຄົມຢ່າງຕັ້ງໜ້າ ສ້າງນະໂຍບາຍພິສິດໃນການຫຼຸດຄ່າເຊົ່າ ແລະ ຊຸກຍູ້ການຄ້າຂາຍອອນໄລ, ເພື່ອຮັກສາລູກຄ້າໃຫ້ໝັ້ນຄົງ ຮ່ວມແຮງຮ່ວມໃຈກັນເພື່ອຜ່ານຜ່າຄວາມທຸກຍາກ. ໃນໄລຍະເວລາການແຜ່ລະບາດຂອງພະຍາດໂຄວິດ 19, ວຽງຈັນເຊັ້ນເຕີໄດ້ນຳສິນຄ້າຂອງຮ້ານຕ່າງໆໄປຂາຍໃນເຟດຮຸກອອນໄລ ແລະ ມີການຮ່ວມມືກັບເວທີການຊື້ຂາຍອອນໄລໃຫຍ່ກວ່າໝູ່ໃນລາວກໍຄື DroppinX ທຸ້ມເທໃນການຊອກຫາຊ່ອງທາງການຂາຍເຄື່ອງ ເພື່ອກະຕຸ້ນການຂາຍ ແລະ ສ້າງລາຍຮັບເພີ່ມ ນີ້ຄືຜົນງານຂອງການຊອກຫາລູກຄ້າ ສ້າງລາຍຮັບໃນຊ່ວງເວລາການແຜ່ລະບາດຂອງພະຍາດໂຄວິດ 19.

ສຳລັບວຽກງານການຊອກຫາລູກຄ້າມາເຊົ່າພື້ນທີ່ຈັດງານ ແລະ ປ້າຍໂຄສະນາ ໄດ້ມີການປັບທິດທາງວ່າການຈັດງານດ້ວຍຕົນເອງ ພາຍໃຕ້ປັດໃຈການຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ 19 ຂອງລັດ, ວຽງຈັນເຊັ້ນເຕີຍັງສາມາດຈັດງານຕ່າງໆໄດ້ຈົນ 20 ກວ່າຄັ້ງ ໂດຍປະຕິບັດຕາມເງື່ອນໄຂຮັກສາຄວາມປອດໄພ ເຊັ່ນ ງານເປີດໂຕຂອງໂທລະສັບ OPPO Reno5 ງານເປີດໂຕຂອງສະປູໄທ ງານສົ່ງເສີມການທ່ອງທ່ຽວໃນຫົວຂໍ້ “ລາວທ່ຽວລາວ” ງານແຂ່ງຂັນການຕົ້ນຂອງຂັນແບບຊິຣອບຊະນະເລີດ ໂມໂຕໂຊຂອງລິດຈາກ໊ວ, ໄດ້ນຳຄົນເຂົ້າມາທ່ຽວໃນຫ້າງໃຫ້ຫຼາຍຂຶ້ນ ແລະ ສ້າງບັນຍາກາດການຊື້ຂາຍສິນຄ້າຢ່າງຂຶດຄຶ້ນຂຶ້ນມາ.

ສຳລັບວຽກງານການຊອກຫາລູກຄ້າມາເຊົ່າພື້ນທີ່ຫ້ອງການ ແມ່ນມີຜົນງານວ່າປະຈຸບັນ ໄດ້ມີ 11 ບໍລິສັດມາເຊົ່ານຳ ອຈຊຕ ອັດຕາສ່ວນການໃຫ້ເຊົ່າແມ່ນ 71,64%. ວຽກງານການຊອກຫາລູກຄ້າແມ່ນໃຫ້ຖືໂຊນຫ້າງເປັນໂຊນປິ່ນອ້ອມຂອງຕຶກຫ້ອງການ ເຊິ່ງສາມາດພັດທະນາໄປພ້ອມກັນ ນີ້ຄືທ່າແຮງຂອງຕຶກຫ້ອງການທີ່

ສາມາດສ້າງຄວາມສະດວກໃຫ້ບັນດາລູກຄ້າ ເຮັດໃຫ້ບັນດາພະນັກງານທີ່ເຮັດວຽກຢູ່ຕຶກຫ້ອງການສາມາດຫັນເປັນກຸ່ມລູກຄ້າຂອງຫ້າງໄດ້. ເຖິງແມ່ນວ່າໄດ້ຮັບການກະທົບຈາກແຜ່ລະບາດຂອງພະຍາດໂຄວິດ 19 ກໍຕາມ ແຕ່ທີມງານ ວຈຊຕ ຍັງໄດ້ປັບປຸງວິທີການບໍລິການໃຫ້ມີປະສິດທິຜົນ, ເພີ່ມຄວາມສາມາດຂອງການບໍລິການ ສ້າງ ວຈຊຕ ເປັນແບຣນໜຶ່ງໃນຂະແໜງການຕຶກຫ້ອງການ, ບົນພື້ນຖານການຮັກສາລູກຄ້າເກົ່າໃຫ້ໝັ້ນຄົງ ສຸມໃສ່ກຸ່ມລູກຄ້າທີ່ຊີໝົດອາຍຸສັນຍາເຊົ່າກັບຕຶກຫ້ອງການອື່ນ ຕັ້ງໃຈຊອກຫາລູກຄ້າໃໝ່ ເພື່ອສ້າງລາຍຮັບຂອງບໍລິສັດໃຫ້ມີການພິ່ມຂຶ້ນ.

## 6. ວຽກທີ່ກ່ຽວຂ້ອງຂອງຄະນະກຳມະການ

6.1 ໃນ 6 ເດືອນຕົ້ນປີ 2021, ສະພາບໍລິຫານໄດ້ຈັດກອງປະຊຸມທັງໝົດ 4 ຄັ້ງ, ໃນນັ້ນ, ກອງປະຊຸມສະພາບໍລິຫານ 3 ຄັ້ງ ແລະ ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 1 ຄັ້ງ.

6.2 ຄະນະກຳມະການລາຍການທີ່ກ່ຽວພັນໄດ້ຈັດກອງປະຊຸມ 01 ຄັ້ງ, ເພື່ອຄົ້ນຄ້ວາການຮັບຊື້ພື້ນຊັບສິນທີ່ເປັນລາຍການທີ່ກ່ຽວພັນ. ສຳລັບເລື່ອງລາຄາຂອງຊັບສິນ ສະເໜີໃຫ້ຈ້າງບໍລິສັດປະເມີນມູນຄ່າຊັບສິນທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມາເປັນຜູ້ປະເມີນ, ຫຼັງຈາກຜົນການປະເມີນອອກມາແລ້ວ ຈະມີການສະເໜີຕໍ່ກອງປະຊຸມສະພາບໍລິຫານພິຈາລະນາ.

6.3 ຄະນະກຳມະການຄັດເລືອກໄດ້ຈັດກອງປະຊຸມ 01 ຄັ້ງ ເພື່ອດຳເນີນການຄັດເລືອກລາຍຊື່ເພື່ອປ່ຽນແທນສະມາຊິກບາງສ່ວນຂອງສະພາບໍລິຫານສະໄໝທີ່ສອງ ແລະ ສະໜອງຂໍ້ມູນພື້ນຖານໃຫ້ສະພາບໍລິຫານພິຈາລະນາ ແລະ ຮັບຮອງ ເພື່ອສະເໜີຕໍ່ກອງປະຊຸມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ພິຈາລະນາ ແລະ ຮັບຮອງ.

6.4 ເພື່ອຮັບປະກັນຄວາມຖືກຕ້ອງ ຂອງບົດລາຍງານການເງິນຕ່າງໆ, ຄະນະກຳມະການກວດສອບ ໄດ້ມີການຈັດກອງປະຊຸມ 2 ຄັ້ງ, ເພື່ອປະຕິບັດວຽກງານການກວດສອບບົດລາຍງານການເງິນຂອງໄຕມາດທີ່ 1 ປະຈຳປີ 2021 ແລະ ບົດລາຍງານການເງິນປະຈຳປີ 2020 ເປັນຢ່າງດີ ໂດຍອີງຕາມແຜນວຽກປະຈຳປີ.

## 7. ຄວາມຮັບຜິດຊອບຕໍ່ສັງຄົມ ຂອງອົງກອນ

7.1 ໃນໄລຍະວັນທີ 28 ເມສາ ຫາ ວັນທີ 16 ພຶດສະພາ 2021, ພາຍໃຕ້ການຊີ້ນຳ ແລະ ການປະສານງານຂອງ ສະຖານທູດຈີນ, ວຈຊຕ ໄດ້ຮ່ວມກັບກະຊວງສາທາລະນະສຸກ ເພື່ອສ້າງຕັ້ງຈຸດບໍລິການສັກວັກຊິນຕ້ານ

ພະຍາດໂຄວິດ 19 ໃຫ້ແກ່ຜົນລະເມືອງລາວ ໃນສູນການຄ້າວຈຊຕ. ຕາມຕົວເລກສະສົມໃຫ້ເຫັນວ່າ ຈຳນວນຄົນທີ່ມາສັກວັກຊິນ ແມ່ນ 13.200 ກວ່າຄົນ ມາສາດເພີ່ມອັດຕາສ່ວນການໄດ້ສັກວັກຊິນຂອງຊາວນະຄອນຫຼວງໃຫ້ສູງຂຶ້ນ, ແລະທາງກະຊວງສາທາລະນະສຸກໄດ້ມອບໃບກຽດຕິຄຸນໃຫ້ ວຈຊຕ ເພື່ອຍ້ອງຍໍຜົນງານໃນການປະກອນສ່ວນໃນການປ້ອງກັນພະຍາດໂຄວິດ 19.




7.2 ຮ່ວມກັບອົງກອງມູນນິທິ 1623 1624 ການແດງ ແລະ ໃຈຮ່ວມໃຈ ໄດ້ຕັ້ງຕູ້ບໍລິຈາກໃນຫ້າງວຽງຈັນເຊັ້ນເຕີເປັນຈຳນວນ 5 ໜ່ວຍ ເພື່ອສາທາລະນະປະໂຫຍດ, ແລະສະສົມເງິນໄດ້ 9.624.000 ກີບ ໃນ 6 ເດືອນຕົ້ນປີ 2021 ເງິນຈຳນວນດັ່ງກ່າວກໍໄດ້ມອບໃຫ້ບັນດາອົງກອງມູນນິທິເປັນທີ່ຮຽບຮ້ອຍແລ້ວ.



## 8. ແຜນທຸລະກິດ 6 ເດືອນທ້າຍປີ 2021

8.1 ເສີບຕໍ່ປະຕິບັດຕາມແຜນການນຳໃຊ້ທຶນທີ່ລະດົມໄດ້, ເລັ່ງລັດວຽກງານການປະເມີນມູນຄ່າຊັບສິນ ເພື່ອສະເໜີໃຫ້ພິຈາລະນາຕາມຂັ້ນຕອນແລ້ວ ປະຕິບັດເປັນຈິງ.

8.2 ສຳລັບທຸລະກິດຂອງຫ້າງ: ວຈຊຕ ຈະພະຍາຍາມຫັນການທ້າທາຍມາເປັນໂອກາດ ເສີບຕໍ່ຍົກສູງລະດັບສິນຄ້າ ແລະ ປັບປຸງການຈັດວາງສິນຄ້າ. ບົນພື້ນຖານລູກຄ້າ ແລະ ຮູບແບບທຸລະກິດທີ່ມີແລ້ວ ຮັກສາໃຫ້ມີຄວາມໝັ້ນຄົງ ແລະ ມີການທະລຸພ້ອມ, ສ້າງເຂດເຄືອງປາເນັ້ນຂຶ້ນມາ ເປັນຂົວທາງທີ່ນຳສິນຄ້າຍີ່ຫໍ້ດັ່ງຂອງສາກົນເຂົ້າມາຂາຍຢູ່ໃນຫ້າງ, ຮ່ວມກັບຄູ່ຮ່ວມຕ່າງໆໃນການຈັດກິດຈະກຳແບບມີແນວຄິດປະຕິສ້າງໃໝ່ຫຼາຍຂຶ້ນ ໃນເວລາທີ່ທາງລັດຖະບານມີການຜ່ອນຜັນມາດຕະການຄວບຄຸມພະຍາດໂຄວິດ 19 ອອກມາ ເພື່ອສ້າງບັນຍາກາດການຊື້ຂາຍສິນຄ້າຢ່າງ ຂຶດຄື້ນຂຶ້ນມາ, ຍາດເອົາໂອກາດໃນຄະນະທີ່ທາງລົດໄຟລາວ-ຈີນເປີດບໍລິການເປັນທາງການ, ທາງປະຕິບັດມາຕະການຄວບຄຸມພະຍາດໂຄວິດ 19 ໃຫ້ເປັນປົກກະຕິຄືນ ເພື່ອສ້າງສະພາບແວດລ້ອມການຊື້-ຂາຍເຄື່ອງໃຫ້ມີຄວາມປອດໄພ, ທາງເພີ່ມທະວີການເຊື່ອມຈອດກັນລະຫວ່າງການຊື້-ຂາຍສິນຄ້າອອນໄລ ອອຟໄລ ຄົ້ນຫາຊອງທາງໃໝ່ເພື່ອເສີມສ້າງແບຣນຂອງສິນຄ້າໃນຫ້າງໃຫ້ຫຼາຍຂຶ້ນ, ແລະຊຸກຍູ້ການໂຄສະນາສິນຄ້າ ນຳສິນຄ້າຍີ່ຫໍ້ດັ່ງເຂົ້າມາເປັນຈິງ ເພີ່ມນະໂຍບາຍໃຫ້ພໍ່ຄ້າຊາວຂາຍ ເສີມຂະຫຍາຍບົດບາດການນຳພາຂອງແບຣນສາກົນ, ບົນພື້ນຖານຮັກສາໃຫ້ມີຄວາມປອດໄພ ເສີບຕໍ່ໃຫ້ມີການຈັດກິດຈະກຳແບບມີແນວຄິດປະຕິສ້າງໃໝ່ໃນທາງດ້ານການຄ້າ ແລະ ວັດທະນາທຳ, ຊຸກຍູ້ການຈັດງານໂມໂຕໂຊ ເທດສະການກາເຟລາວ-ສາກົນໃຫ້ເປັນຈິງ ສິ່ງເສີມການຮັບຈ້າງຈັດງານນຳຄູ່ຮ່ວມ ແລະ ເພີ່ມທະວີການຮ່ວມມືກັບບັນດາວິສາຫະກິດທີ່ດັ່ງໃນລາວ, ເນັ້ນໃສ່ງານຂອງສິນຄ້າຍີ່ຫໍ້ດັ່ງ ແລະ ງານສິ່ງເສີມວັດທະນາທຳ ສ້າງເປັນຈຸດໃໝ່ຂອງການເພີ່ມລາຍຮັບ, ເສີມສ້າງການຮັບຈ້າງຈັດງານ ແລະ ການໃຫ້ເຊົ່າພື້ນທີ່ຈັດງານ ເປັນເສົາແກ່ນທີ່ສ້າງກຳໄລໄດ້ ແລະ ດຶງຄົນເຂົ້າມາເລາะທ່ຽວໃນຫ້າງໃຫ້ຫຼາຍຂຶ້ນ.

8.3 ສຳລັບທຸລະກິດຂອງຕຶກຫ້ອງການ: ຍ້ອນວ່າໄດ້ຮັບຜົນກະທົບຈາກການແຜ່ພະຍາດຂອງພະຍາດໂຄວິດ 19, ບັນດາບໍລິສັດໄດ້ສັ່ງໃຫ້ພະນັກງານເຮັດວຽກຢູ່ບ້ານເພື່ອຫຼຽກລ້ຽງການຊຸມໂຮມ, ເສດຖະກິດລາວກໍ່ມີການຖອຍລົງ ເຮັດໃຫ້ທຸລະກິດຂອງບໍລິສັດຕ່າງໆປະເຊີນຄວາມຫຍຸ້ງຍາກຫຼາຍ ແລະໄດ້ມີການສະເໜີມາຍັງທາງ ວຈຊຕ ເພື່ອຂໍຫຼຸດຄ່າເຊົ່າ ແລະ ຫຍໍ້ພື້ນທີ່ເຊົ່າໃຫ້ລົງ ເຮັດໃຫ້ ວຈຊຕ ເປັນຜູ້ແບກຮັບການກະທົບໂດຍທາງອ້ອມ. ນອກຈາກນັ້ນ ການຊອກຫາລູກຄ້າຍັງປະເຊີນຄວາມຫຍຸ້ງຍາກ ເພາะການເປີດດ່ານເປັນປົກກະຕິ ເຮັດໃຫ້ບໍ່ມີນັກລົງທຶນໃໝ່ເຂົ້າ

VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ມາລາວ ຜົນການຫາລູກຄ້າໃໝ່ບໍ່ໄດ້ບັນລຸຕາມການຄາດຫວັງ. ໃນ 6 ເດືອນທ້າຍປີ 2021, ວຈຊຕ ຈະເນັ້ນການ ສ້າງຄຸນນະພາບໃນບໍລິການໃຫ້ສູງຂຶ້ນ ເພີ່ມຄວາມສາມາດໃນການຄຸ້ມຄອງບໍລິຫານ ຫຼຸດລົງຄ່າໃຊ້ຈ່າຍຕ່າງໆ ຍົກ ສູງປະສິດທິພາບຂອງການນຳໃຊ້ເງິນງົບປະມານ, ເອົາໂອກາດທີ່ລູກຄ້າມີຄວາມຕ້ອງການໃນການປ່ຽນຫ້ອງການ ໂດຍຍ້ອນໂຄວິດ 19, ສົ່ງເສີມການພັດທະນາພາຍໃນໃຫ້ປະສົມປະສານກັນ ຂະຫຍາຍທ່າແຮງການເຊື່ອມຕໍ່ລະ ຫວ່າງໂຊນຫ້າງກັບຕຶກຫ້ອງການ, ອອກແຮງຊຸກຍູ້ການຊອກຫາລູກຄ້າພາຍໃນປະເທດລາວ ສະເພາະລູກຄ້າທີ່ ໝົດອາຍຸສັນຍາເຊົ່າກັບຕຶກຫ້ອງການອື່ນ ພະຍາຍາມໃຫ້ມີກ້າວໜ້າ, ຍົກສູງຄຸນນະພາບຂອງການບໍລິການ ສ້າງຮູບ ພາບຕຶກຫ້ອງການ ວຈຊຕ ເປັນຍີ່ຫໍ້ດັງ ປັບປຸງຊອບແວ ແລະ ອຸປະກອນຮາດແວໃຫ້ດີກວ່າເກົ່າ ສ້າງຄຸນນະພາບ ແລະ ບໍລິການຂອງຕຶກຫ້ອງການໃຫ້ກາຍເປັນແບຣນດັງທີ່ໄດ້ມາດຕະຖານສາກົນ.

ປະທານສະພາບໍລິຫານ